## ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 5 ພຶສພາ 2024 (05-05-2024)

---

### ການນະມັສການພຣະເຈົ້າ

**ຈຸດສຳຄັນໃນບົດຮຽນ:** ເວລາເຮົານະມັສການພຣະເຈົ້າຮ່ວມກັນ, ເຮົາພົບຄວາມຍິນດີໃນການສະຖິດນຳຂອງພຣະອົງ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ບາງກິຈກັມພວກເຮົາພົບຄວາມປິ້ມປິຕິຢ່າງໃຫຍ່ຫຼວງຮ່ວມກັບຄົນອື່ນໆ. ຕົວຢ່າງ, ການຄົ້ນຄ້ວາພົບວ່າການຮ້ອງເພງເປັນກຸ່ມໃຫ້ຜົນດີກວ່າຮ້ອງໃນຫ້ອງນ້ຳຄົນດຽວ. ຮ້ອງເພງຮ່ວມກັນສົ່ງຜົນດີຄື:

- ສຸຂພາບຈິດໃຈແລະຄວາມສຸກ,
- ຄວາມຜູກພັນເລິກເຊິ່ງລະຫວ່າງນັກຮ້ອງ,
- ຄວາມເປັນນ້ຳນຶ່ງໃຈດຽວກັນຂອງຊຸມຊົນ,
- ຣະບົບພູມຕ້ານທານສູງກວ່າ,
- ແລະ ການຜ່ອນຄາຍ.

ນັກດົນຕຣີແລະນັກປະພັນ, ເຈມ ຊຽວ (James Sill), ໄດ້ຕັ້ງຄນະນັກຮ້ອງທ້ອງຖິ່ນແລະບ່ອນທຳງານຂຶ້ນ. ກໍ່ຕັ້ງຄນະນັກຮ້ອງສຳລັບຄົນໄຮ້ບ້ານໃນ ລີເວີພູ(Liverpool) ແລະ ນ໊ອດ ເວວ, ອັງກິດ (North Wales, England.) ລາວຄວບຄຸມຫ້ອງຝຶກຊ້ອມກຸ່ມນັກຮ້ອງ-ແຕ່ລະ-ວັນແບບສາກົນ. ທ່ານ ຊຽວອ້າງວ່າບາງສິ່ງບາງຢ່າງພິເສດເກີດຂຶ້ນເມື່ອພວກເຮົາຮ້ອງເພງຮ່ວມກັບຄົນອື່ນ. "ພວກເຮົາແບ່ງປັນເປົ້າໝາຍ...ພວກເຮົາເຂົ້າໄປໃນສິ່ງທີ່ໃຫຍ່ກວ່າຕົວເຮົາເອງ." ຍິ່ງກວ່າການຮ່ວມມືກັນລ້າໆ, "ພວກເຮົາຮູ້ສຶກສນິດສນົມສຸດໆ ກັບຄົນທີ່ເຮົາຮ້ອງເພງນຳກັນ, ເຖິງແມ່ນເຮົາຈະບໍ່ເຄີຍພົບກັນມາກ່ອນ." ຖ້ານີ້ເປັນຈິງກັບການຮ້ອງເພງທົ່ວໆໄປ, ມັນຍິ່ງເປັນຈິງເມື່ອພວກຄຣິສະຕຽນມາຮ່ວມກັນນະມັສການ. ການນະມັສການສ່ວນຕົວ, ແຕ່ລະວັນກໍສຳຄັນ. ແຕ່ມີບາງສິ່ງທີ່ເຮົາໄດ້ຮັບ..ແລະໃຫ້...ໃນເມື່ອພວກເຮົາ, ຄຣິສຕະຈັກ, ຮ່ວມເປັນກາຍອັນດຽວກັນຊຸມນຸມຍ້ອງຍໍສັຣເສີນພຣະຜູ້ເປັນເຈົ້າຂອງເຮົານຳກັນ.

*ມີກິຈກັມອັນໃດທີ່ດີກວ່າເມື່ອລວມກັນເປັນຝູງ?*

**ພຣະຄັມພີກ່າວວ່າແນວໃດ:** (ເບິ່ງ ຕາມຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

**1. <u>ເພງສັຣເສີນ 34:1-3</u>.**

*1. ຂ້ານ້ອຍຈະຂອບພຣະຄຸນພຣະຜູ້ເປັນເຈົ້າຕລອດເວລາ ຂ້ານ້ອຍຈະບໍ່ເຊົາສັຣເສີນພຣະອົງຈັກເທື່ອ 2. ຂ້ານ້ອຍຈະສັຣເສີນໃນສິ່ງທີ່ພຣະອົງຊົງກະທຳ ຂໍໃຫ້ທຸກໆຄົນທີ່ຖືກຂົ່ມເຫັງຟັງເອົາແລະຍິນດີ 3. ຈົ່ງພາກັນປະກາດຄວາມຍິ່ງໃຫຍ່ຂອງພຣະຜູ້ເປັນເຈົ້າ ຂໍໃຫ້ພວກເຮົາພ້ອມກັນສັຣເສີນພຣະນາມຂອງພຣະອົງ.*

ສິ່ງລ້ຳເລີດເກີດຂຶ້ນເວລາເຮົາມາຮ່ວມກັນນະມັສການ. ພຣະເຢຊູໄດ້ສັນຍາວ່າຈະມາພົບກັບເຮົາເມື່ອເຮົາຊຸມນຸມຮ່ວມກັນໃນພຣະນາມຂອງພຣະອົງ (ມັດທາຍ 18:19-20). ການຢາກນະມັສການຮ່ວມກັນຂອງພວກເຮົາເຊື້ອເຊີນພຣະບິດາແຫ່ງແດນສວັນຂອງພວກເຮົາໃຫ້ເປັ່ງຣັສມີຂອງພຣະອົງຖ້າມກາງເຮົາ (2 ຂ່າວຄາວ 5:11-14; ກິຈການ 2:1-4). ຂນະທີ່ເພງສັຣເສີນຂອງດາວິດເລິກເຊິ່ງເປັນການສ່ວນຕົວ, ເພງສັຣເສີນ 34 ເປັນການເຊື້ອເຊີນໃຫ້ຄົນອື່ນເຂົ້າຮ່ວມເພີ່ມສັຣເສີນພຣະເຈົ້າ. ນີ້ຈັດວ່າເປັນເພງສັຣເສີນແຫ່ງປັນຍາແລະເປັນເພງຂອງການສັຣເສີນ. ຂຽນໃນຮູບແບບເກາະກ່າຍ, ແຕ່ລະຂໍ້ຕັ້ງຕົ້ນດ້ວຍຕົວພຍັນຊນະພາສາເຮັບເຣີຕາມລຳດັບ. ເທັກ

ເທັກນິກນີ້ຊ່ອຍໃຫ້ຜູ້ນະມັສການຈື່ຈຳເພງໄດ້ດີ. ຂອດຕໍ່ໜ້າເພງອ້າງເຖິງດາວິດ "ໃນເວລາເພິ່ນທຳທ່າເປັນບ້າຢູ່ຕໍ່ໜ້າອາບີເມເລັກ." ຊື່ "ອາບີເມເລັກ" ບາງຄັ້ງອາບີເມເລັກຖືກໃຊ້ເປັນເຄື່ອງໝາຍກະສັດເຊັ່ນ: ຟາຣາໂອ ຫຼືກາຍຊາ. ອາບີເມເລັກຜູ້ນີ້ເປັນເໝືອນກະສັດອາກີເຊ ແຫ່ງເມືອງກາດ (1ຊາມູເອນ 21:10-15), ຜູ້ຊຶ່ງດາວິດແລ່ນໄປເພິ່ງຕອນປົບໜີຈາກຊາອູນ. ເວລາຄົນໃຊ້ຂອງກະສັດອາກີເຊໄດ້ເຕືອນເພິ່ນກ່ຽວກັບໄຊຊະນະຂອງທະຫານດາວິດ, ດາວິດກໍ "ຢ້ານກົວກະສັດທີ່ສຸດ"(ຂໍ້ 12). ເພື່ອປ້ອງກັນຕົວເອງ, ດາວິດກໍທຳທ່າເປັນບ້າແລະໜີໄປຢ່າງວຸດວິດ. ເພງບົດ 34 ສັຣເສີນພຣະເຈົ້າຜູ້ປົດປ່ອຍ. ເພາະວ່າດາວິດມອງພຣະເຈົ້າເປັນແຫຼ່ງກຳລັງແລະປ້ອງກັນ, ເພິ່ນສັຣເສີນພຣະຜູ້ເປັນເຈົ້າ "ຕລອດເວລາ." ການສັຣເສີນຕໍ່ເນື່ອງຂອງດາວິດ "ຢູ່ທີ່ຮີມຝີປາກຂອງຂ້ານ້ອຍສເມີ" ສະທ້ອນເຖິງຄຳຕັກເຕືອນຂອງທ່ານໂປໂລໃນພາຍລຸນວ່າ: "ຈົ່ງຊົມຊື່ນຍິນດີຢູ່ສເມີ. ຈົ່ງອ້ອນວອນຢູ່ບໍ່ຂາດ. ຈົ່ງຂອບພຣະຄຸນໃນທຸກສິ່ງ "(1ເທສະໂລນິກ 5:16-18ກ). ໃນການຢຳເກງຄວາມຍິ່ງໃຫຍ່ຂອງພຣະເຈົ້າ ດາວິດໄດ້ໂອ້ອວດພຣະຜູ້ເປັນເຈົ້າ. ການໂອ້ອວດເປັນການໂງ່ຈ້າກໍຕໍ່ເມື່ອເຮົາໂອ້ອວດຕົວເຮົາເອງ. ແຕ່ເປັນການເໝາະສົມເມື່ອເຮົາໂອ້ອວດກ່ຽວກັບພຣະເຈົ້າ. ພຣະຄັມພີໄດ້ຢ້ຳເຕືອນຄົນຂອງພຣະເຈົ້າໃຫ້ຍົກຍໍພຣະອົງຫຼາຍກວ່າ:

- "ເພາະພຣະອົງແທ້ໆພວກເຂົາຈຶ່ງເປັນສຸກໃຈຫຼາຍ" (ພສສ 5:11).
- "ຂ້ານ້ອຍຈະຮ້ອງດ້ວຍຄວາມຊົມຊື່ນຍິນດີ ແລະ ຈະຍົກຍໍພຣະນາມຍິ່ງໃຫຍ່ທີ່ສຸດຂອງພຣະອົງ" (ພສສ 9:2).
- "ພວກຂ້ານ້ອຍຈະຍ້ອງຍໍສັຣເສີນພຣະເຈົ້າຢູ່ສເມີ ແລະຈະໂມທະນາພຣະຄຸນພຣະອົງຕລອດໄປເປັນນິດ" (ພສສ 44:8).
- "ແຕ່ເຈົ້າຈະມີຄວາມສຸກ ຍ້ອນວ່າເຮົາເປັນພຣະເຈົ້າຂອງເຈົ້າ ແລ້ວເຈົ້າຈະກ່າວສັຣເສີນເຮົາ ພຣະເຈົ້າອົງບໍຣິສຸດຂອງອິສຣາເອນ" (ອຊຢ 41:16ຂ).
- "ຜູ້ອວດອ້າງນັ້ນຈົ່ງເອົາພຣະອົງເຈົ້ານັ້ນມາອວດອ້າງ" (1 ກຣທ 1:31ຂ).

ເປັນການດີທີ່ຢ້ຳເຕືອນເຮົາເອງແລະເຕືອນກັນວ່າບໍ່ມີໃຜເໝືອນພຣະເຈົ້າຂອງເຮົາ. ສິ່ງນັ້ນຕົງກັບສິ່ງທີ່ກະສັດດາວິດໄດ້ສນັບສນູນໃນ ພສສ 43:3 ແລະເຊື້ອເຊີນວ່າ "ຈົ່ງພາກັນປະກາດຄວາມຍິ່ງໃຫຍ່ຂອງພຣະຜູ້ເປັນເຈົ້າ ຂໍໃຫ້ພວກເຮົາພ້ອມກັນສັຣເສີນພຣະນາມຂອງພຣະອົງ." ເພິ່ນຊຸກຍູ້ຜູ້ຕິດຕາມພຣະເຈົ້າຮ່ວມກັບເພິ່ນພ້ອມກັນຍົກສຽງແຫ່ງຄວາມຍິນດີໃນຄວາມຍິ່ງໃຫຍ່ຂອງພຣະເຈົ້າ.

*ທ່ານຊົມຊື່ນຍິນດີນຳຫຍັງແທ້ໆເມື່ອນະມັສການໃນໂບດຂອງທ່ານ?*

## 2. <u>ເພງສັຣເສີນ 34:8-10</u>.

*8. ພວກທ່ານຈະພົບດ້ວຍຕົນເອງວ່າ ພຣະຜູ້ເປັນເຈົ້າຊົງດີພຽງໃດ ຄວາມສຸກເປັນຂອງຜູ້ທີ່ສແວງຫາຄວາມປອດພັຍໃນພຣະອົງ. 9. ໄພ່ພົນທຸກຄົນຂອງພຣະຜູ້ເປັນເຈົ້າຈົ່ງຢ້ານຢຳພຣະອົງ ຜູ້ທີ່ຢຳເກງພຣະອົງຈະໄດ້ຮັບທຸກສິ່ງຕາມທີ່ເຂົາຕ້ອງການ 10. ແມ່ນແຕ່ຝູງສິງກໍຍັງຂາດອາຫານແລະອຶດຫິວ ແຕ່ວ່າຜູ້ທີ່ເຊື່ອຟັງພຣະຜູ້ເປັນເຈົ້າຈະບໍ່ຂາດສິ່ງທີ່ດີເລີຍ.*

ໃນຈົດໝາຍອ່ານວ່າ:

*ເຖິງຜູ້ບໍຣິຈາກໃຈດີຂອງຂ້ານ້ອຍ, ບໍ່ຮູ້ຈະຂອບໃຈທ່ານແນວໃດຕໍ່ການກະທຳທີ່ບໍ່ເຫັນແກ່ຕົວທີ່ເປັນຜົນດີຕໍ່ຊີວິດຂອງຂ້ານ້ອຍ. ນ້ຳໃຈແລະຄວາມເມດຕາຂອງທ່ານບໍ່ມີຂອບເຂດໃນເວລາທີ່ທ່ານຕັດສິນໃຈເປັນຜູ້ບໍຣິຈາກ, ແລະສຳລັບສິ່ງນີ້ ຂ້ານ້ອຍຂໍຂອບຄຸນຕລອດໄປ. ເມື່ອຂ້ານ້ອຍອອກໂຮງໝໍ, ເຂົາໄດ້ "ກົດກິ່ງ" (ringing the bell) ຫາຂ້ານ້ອຍສຳລັບການປິ່ນປົວຄັ້ງສຸດທ້າຍ. ມັນເປັນຄວາມຮູ້ສຶກທີ່ດີສຳລັບຂ້ານ້ອຍແລະຂ້ານ້ອຍຮູ້ສຶກຕິດພັນກັບທ່ານຕລອດໄປໃນຂນະນັ້ນ. ນ້ຳຕາແຫ່ງຄວາມຍິນດີໄຫຼອອກມາ. ໃນເມື່ອວັນພັກໃກ້ເຂົ້າມາ, ແລະຂ້ານ້ອຍສາມາດໃຊ້ເວລາກັບຄອບຄົວແລະເພື່ອນໆ ເປັນການຂອບຄຸນທ່ານຕລອດເຊັ່ນດຽວກັນ. ຂໍພຣະເຈົ້າອວຍພອນທ່ານແລະຂໍໃຫ້ວັນພັກຂອງທ່ານຈົ່ງເປັນວັນທີ່ປະເສີດເລີດລ້ຳ. ຈົ່ງຮັບຮູ້ວ່າ ຄວາມຄິດ ແລະການອະທິຖານຂອງຂ້ານ້ອຍຈະຢູ່ກັບທ່ານແລະຄອບຄົວ, ແລະຄວາມຂອບຄຸນຂອງຂ້ານ້ອຍມີຕໍ່ເຂົາທີ່ນຳເອົາຄວາມຄິດຮອດ, ແລະ ຈິດວິນຍານຄວາມເມດຕາມາໃຫ້. ຂອບໃຈ, ຂອບໃຈ, ຂອບໃຈ! ທ່ານໄດ້ແຕະຕ້ອງໃຈຂອງຂ້ານ້ອຍຕລອດໄປ.*

ຈົດໝາຍນີ້ສົ່ງເຖິງ ມໍລີ ຊາແວສກີ(Mollie Zawadske), ຂແນງພຍາບານຂອງມະຫາວິທະຍາລັຍ ເຊນຟແຣນຊີສ, ເມື່ອລາວໄດ້ຮຽນຮູ້ກ່ຽວກັບ ຄູ່ຕົງກັນ (Be The Match) ແລະໄດ້ຕັດສິນໃຈເປັນຜູ້ບໍຣິຈາກ. ຄູ່ຕົງກັນແມ່ນອົງການນຶ່ງທີ່ຈັບຄູ່ຄົນເຈັບມະເຮັງເລືອດກັບຜູ້ອາສາສມັກບໍຣິຈາກກະດູກ-ຮັກສາຊີວິດຫຼືຈຸລັງເລືອດ (blood stem cells). ຊາແວສກີ ໃຫ້ຄຳເຫັນວ່າ, "ເມື່ອເຈົ້າເຮັດວຽກໃນການຢາ, ແລະເຈົ້າຮູ້ຈັກກ່ຽວກັບມະເຮັງວິທຍາໜ້ອຍ, ເຈົ້າຮູ້ດີວ່າການກົດກິ່ງສຳລັບການປິ່ນປົວຄັ້ງສຸດທ້າຍໝາຍຄວາມວ່າເຂົາຢູ່ໃນການຍົກເລີກ, ແລະນັ້ນບໍ່ແມ່ນສິ່ງທີ່ຂ້ອຍຄາດຫວັງເລີຍ. ຂ້ອຍບໍ່ຄິດວ່າຈະປິ່ນປົວມະເຮັງນັ້ນໄດ້; ຂ້ອຍຄິດແຕ່ພຽງວ່າຈະເຍື້ອນເວລາໃຫ້ເຂົາຕື່ມ." ນາງກ່າວຕື່ມອີກວ່າ, "ຂ້ອຍໄດ້ຮູ້ສຶກວ່າໄດ້ຖືກຮຽກເອີ້ນໃຫ້ເຮັດ. ນີ້ແມ່ນສິ່ງທີ່ຂ້ອຍໄດ້ເຊັນຊື່ໄວ້, ແຕ່ຂ້ອຍບໍ່ຄາດຫວັງຢ່າງຈິງຈັງວ່າຈະໄດ້ຮັບການຕິດຕໍ່ມາ." ການ "ຂອບຄຸນ" ອາດບໍ່ຄາດຫວັງວ່າຈະໄດ້ຮັບສຳລັບ ຊາແວສກີ, ແຕ່ຄົນສ່ວນຫຼາຍຄາດຫວັງວ່າຈະເປັນຜູ້ໄດ້ຮັບຂອງຂວັນເມດຕາຢ່າງນັ້ນເພື່ອສະແດງຄວາມຮູ້ບຸນຄຸນ. ສຳລັບໃຜກໍຕາມທີ່ເຄີຍໄດ້ຮັບຄວາມເມດຕາ, ການເວົ້າວ່າ "ຂໍຂອບໃຈ" ແມ່ນໜ້ອຍທີ່ສຸດທີ່ພວກເຮົາສາມາດເຮັດໄດ້. ພວກທີ່ໄດ້ຮຽນຄວາມກະຕັນຍູເວົ້າວ່າມັນເປັນຜົນຂອງຄວາມຄິດສອງ-ຂັ້ນຕອນ. ບາດກ້າວທີ່ນຶ່ງ ແມ່ນທ່ານຮັບຮູ້ວ່າໄດ້ຮັບຜົນຮັບໃນທາງບວກ. ບາດກ້າວທີສອງ ແມ່ນທ່ານຮັບຮູ້ວ່າມີແຫຼ່ງພາຍນອກສຳລັບຜົນຮັບໃນທາງບວກນີ້. ດາວິດໄດ້ສະແດງໃຫ້ເຫັນທັງສອງບາດກ້າວນີ້ໃນຂໍ້ພຣະຄັມພີເຫຼົ່ານີ້. **ປະການທີນຶ່ງ,** ເພິ່ນອ້າງວ່າ ໂດຍການວາງໃຈໃນພຣະເຈົ້າເພິ່ນຈຶ່ງໄດ້ຮັບຜົນໃນທາງບວກ: (1) ເພິ່ນມີຄວາມສຸກ (ຮັບພອນ, ແລະຄວາມຍິນດີ, ຂໍ້ 8). (2) ເພິ່ນບໍ່ຂາດເຂີນສິ່ງໃດ(ຂໍ້ 9). (3) ເພິ່ນບໍ່ຂາດສິ່ງດີເລີຍ, (ຂໍ້ 10). **ປະການທີສອງ,** ດາວິດຮັບຮູ້ວ່າຄວາມສຸກແລະການຈັດຫາຂອງເພິ່ນມາຈາກພຣະເຈົ້າ. ຄຳເວົ້າຂອງເພິ່ນມີເນື້ອນັຍວ່າຄວາມຄິດທີ່ວ່າ ຄຳອວຍພອນໃນຊີວິດຂອງດາວິດບໍ່ໄດ້ເປັນຜົນມາຈາກການກະທຳຂອງເພິ່ນເອງ. ສິ່ງເຫຼົ່ານີ້ມີມາສູ່ເພິ່ນ ມາຈາກຄວາມສັມພັນຂອງເພິ່ນກັບພຣະບິດາແຫ່ງແດນສວັນເທົ່ານັ້ນ. ຍ້ອນເພິ່ນໄດ້ປະສົບກັບຄຸນຄວາມດີຂອງພຣະເຈົ້າດ້ວຍຕົວເພິ່ນເອງ, ຜູ້ຂຽນເພງສັຣເສີນ, ໄດ້ເຊື້ອເຊີນຄົນອື່ນ "ໃຫ້ໄດ້ຊີມແລະໄດ້ພົບ" ຄວາມດີຂອງພຣະເຈົ້າດ້ວຍຕົວເອງ. ມັນຄືການຮັບຮອງຈາກຜູ້ທີ່ໄດ້ລອງສິ່ງທີ່ເຂົາແນະນຳແລະຢືນຢູ່ດ້ານຫຼັງໂດຍບໍ່ຕ້ອງຈອງລ່ວງໜ້າ. ແມ່ນແຕ່ຝູງສິງໜຸ່ມ, ແຂງແຮງ ແລະຫາກິນເອງໄດ້ ກໍຍັງຂາດອາຫານແລະອຶດຫິວບາງເວລາ. ໃນທາງກັບກັນ, ຜູ້ທີ່ເຊື່ອຟັງພຣະຜູ້ເປັນເຈົ້າສາມາດເວົ້າວ່າ, *"ພຣະຜູ້ເປັນເຈົ້າຊົງເປັນຜູ້ລ້ຽງຂ້ານ້ອຍ ຂ້ານ້ອຍມີທຸກສິ່ງທີ່ຂ້ານ້ອຍຕ້ອງການ" (ພສສ 23:1).* ສິ່ງນີ້ບໍ່ຄວນຈະຖືເປັນປໂຍກສຳລັບທຸກຄົນ. ພວກເຮົາບໍ່ໄດ້ຮັບທຸກສິ່ງທີ່ເຮົາຕ້ອງການ. ແລະຍັງມີຄຣິສະຕຽນຈຳນວນນຶ່ງດຳເນີນຊີວິດຢູ່ໃນຄວາມຍາກຈົນ. ແຕ່ຜູ້ເຊື່ອສາມາດຢືນຢັນເຖິງວິທີການຫຼາຍຢ່າງ ທີ່ພຣະເຈົ້າຊົງຕອບສນອງ ຄວາມຕ້ອງການເລິກໆທີ່ສຸດຂອງເຮົາຊຶ່ງບໍ່ມີໃຜສາມາດທຳໄດ້.

*ທ່ານໄດ້ພົບເຫັນພຣະເຈົ້າຈັດຫາໃຫ້ໂບດຫຼືກຸ່ມຂອງເຮົາຢ່າງໃດ?*

## 3. <u>ເພງສັຣເສີນ 34:15-18</u>.

*15. ພຣະຜູ້ເປັນເຈົ້າຊົງຄອຍເຝົ້າເບິ່ງແຍງຄົນຊອບທັມ ແລະຊົງຟັງສຽງຮ້ອງຂໍຂອງພວກເຂົາ. 16. ແຕ່ພຣະອົງຊົງຫັນໜ້າໜີຈາກຜູ້ທີ່ທຳຊົ່ວ ດັ່ງນັ້ນ ແມ່ນແຕ່ພວກປະຊາຊົນຂອງເຂົາກໍຈະລືມເຂົາໄປ. 17. ເມື່ອຄົນຊອບທັມຮ້ອງຫາພຣະຜູ້ເປັນເຈົ້າພຣະອົງຊົງຟັງເຂົາ ພຣະອົງຊົງຊ່ອຍຊີວິດເຂົາໃຫ້ພົ້ນຈາກຄວາມທຸກລຳບາກ. 18. ພຣະຜູ້ເປັນເຈົ້າຊົງສະຖິດຢູ່ໃກ້ຜູ້ທີ່ຂາດຄວາມກ້າຫານ ແລະພຣະອົງຊົງຊ່ອຍຜູ້ທີ່ສູນເສັຽຄວາມຫວັງທຸກຢ່າງ.*

ຜູ້ທີ່ເຄີຍປະສົບກັບການເສບຕິດອາດຮູ້ຈັກ AA 12 ບາດກ້າວເຊັ່ນກັນ. ອົງການຊ່ອຍຜູ້ຕິດເຫຼົ້າໄດ້ຖືກກໍ່ຕັ້ງຂຶ້ນໂດຍນາຍໜ້າຊື້ຂາຍຫຸ້ນ (Stockbroker) ໃນປີ 1935, Bill Wilson, ແລະ ນາຍແພດຜ່າຕັດ, Dr. Bob Smith, ທັງສອງເຄີຍຕິດເຫຼົ້າມາກ່ອນ. ພວກເຂົາໄດ້ອອກລ່າງຫຼັກການ 12 ບາດກ້າວໂດຍອີງຕາມຫຼັກຄຳສອນ ຂອງອົງການຄຣິສະຕຽນຊື່ວ່າ ກຸ່ມອ໊ອກສຟອດ(The Oxford Group). ຈົ່ງພິຈາຣະນາບາດກ້າວ 1-3: **(1)** ພວກເຮົາຍອມຮັບວ່າພວກເຮົາບໍ່ມີພລັງເໜືອເຫຼົ້າ-ຊຶ່ງຊີວິດເຮົາກາຍເປັນຊີວິດທີ່ບໍ່ສາມາດຈັດການໄດ້. **(2)** ໄດ້ມາເຊື່ອອຳນາດທີ່ໃຫຍ່ກວ່າຕົວເຮົາເອງສາມາດຟື້ນຟູເຮົາໃຫ້ກັບມາມີສະຕິໄດ້. **(3)** ໄດ້ຕັດສິນໃຈຫັນປ່ຽນແນວຄິດແລະຊີວິດຂອງເຮົາສູ່ການເບິ່ງແຍງຂອງພຣະເຈົ້າຕາມທີ່ເຮົາເຂົ້າໃຈພຣະອົງ. ສົມທຽບບາດກ້າວເຫຼົ່ານີ້ກັບພຣະຄັມພີສອນ:

**(1)** "ຂນະທີ່ເຮົາທັງຫຼາຍຍັງຂາດກຳລັງ ພຣະຄຣິດໄດ້ຊົງສິ້ນພຣະຊົນເພື່ອແທນຄົນຊອບທັມໃນເວລາອັນເໝາະສົມ"(ໂຣມ 5:6). **(2)** "ໃນຜູ້ອື່ນຄວາມລອດພົ້ນບໍ່ມີ ດ້ວຍວ່າບໍ່ມີນາມຊື່ອື່ນໃດທົ່ວໃຕ້ຟ້າ ທີ່ຊົງປະທານແກ່ມະນຸດ ເພື່ອໃຫ້ເຮົາທັງຫຼາຍຕ້ອງໄດ້ພົ້ນ" (ກຈກ 4:12). **(3)** "ເພາະວ່າພຣະເຈົ້າຊົງຮັກໂລກຈົນໄດ້ປະທານພຣະບຸດອົງດຽວຂອງພຣະອົງ ເພື່ອທຸກຄົນທີ່ວາງໃຈເຊື່ອໃນພຣະບຸດນັ້ນຈະບໍ່ຈິບຫາຍ ແຕ່ມີຊີວິດອັນຕລອດໄປເປັນນິດ" (ໂຢຮັນ 3:16).

ຂ້ອນຂ້າງກົງກັນຂ້າມຂອງການຍອມຈຳນົນຕໍ່ຄວາມເປັນພຣະເຈົ້າຫຼືການເສີມພລັງໃຫ້ຕົວເອງ ຄຣິສຕະສາສນາຄືການຮັບຊາບເຖິງຄວາມສິ້ນຫວັງຂອງພວກເຮົາແລະການເພິ່ງພາທີ່ສຸດຂີດໃນພຣະເຈົ້າຜູ້ສ້າງຂອງເຮົາ. ນີ້ເປັນຈິງກັບຄວາມພົ້ນ ແຕ່ມັນກໍເປັນຈິງສຳລັບການດຳເນີນຊີວິດໃນແຕ່ລະວັນ. ພວກເຮົາຕ້ອງການປັນຍາຂອງພຣະເຈົ້າ, ການຈັດຫາໃຫ້, ພລັງ, ການນຳພາ, ການປິ່ນປົວ, ແລະຄວາມຮັກ. ຜູ້ເຊື່ອສຳນຶກແລະເຫັນພ້ອມກັບຄຳຖແລງຂອງພຣະເຢຊູ, "ເພາະຖ້າແຍກຈາກເຮົາແລ້ວພວກທ່ານບໍ່ອາດເຮັດສິ່ງໃດໄດ້" (ໂຢຮັນ 15:5). ໃນເພງສັຣເສີນ 34:15-18, ຜູ້ຂຽນເພງສັຣເສີນວາດພາບພຣະບິດາທີ່ຮັກ, ຜູ້ທີ່ສືບຕໍ່ຟັງສຽງຮ້ອງໄຫ້ຂອງບັນດາລູກຂອງພຣະອົງ. ພຣະອົງເອົາໃຈໃສ່, ຫ່ວງໃຍ, ແລະ ກະຕືລືລົ້ນທີ່ຈະຊ່ອຍ. ພໍ່ແມ່ໃໝ່ທີ່ເອົາເດັກເກີດໃໝ່ກັບບ້ານຈາກໂຮງໝໍ ມານອນຢ່າງລະແວງໃນຕອນແລກ, ໂດຍພຍາຍາມຟັງສຽງຮ້ອງຄ່ອຍໆຈາກເດັກອ່ອນ. ຍິ່ງຣະມັດຣະວັງກວ່ານັ້ນ ຜູ້ຄຸ້ມຄອງພວກເຮົາບໍ່ເຄີຍເຊືອບຫຼັບໄປ (ພສສ 121:4). <u>ການດູແລຂອງພຣະອົງສມ່ຳສເມີ. ພຣະເຈົ້າຕອບສນອງຕໍ່ຄົນຊອບທັມ, ຄົນອົກຫັກ, ແລະຜູ້ທີ່ຖືກຢ່ຳຍີຝ່າຍວິນຍານ. ທ່ານສາມາດເວົ້າໄດ້ວ່າພຣະເຈົ້າມີບ່ອນພິເສດໃນໃຈຂອງພຣະອົງສຳລັບຜູ້ທີ່ແຕກຫັກແລະຖ່ອມຕົວລົງ.</u>

*ການນະມັສການຊ່ວຍຄົນອົກຫັກແລະຖືກຢ່ຳຍີດ້ານຈິດວິນຍານຢ່າງໃດ?*

ພຣະຄັມພີສ່ວນຫຼາຍຮຽກຮ້ອງໄພ່ພົນຂອງພຣະເຈົ້າໃຫ້ກັບໃຈຈາກຄວາມບາບແລະກັບຄືນຫາພຣະອົງ. ເວລາເທວະດາປົດປ່ອຍເປໂຕອອກຈາກຄຸກ, ເພິ່ນໄປເຮືອນທີ່ເພິ່ນພົບຄົນອື່ນໆຮ່ວມກັນອະທິຖານ(ກຈກ 12:6-16). ໃນວັນຫຼັງຈາກພຣະເຢຊູຄືນພຣະຊົນແລະສະເດັດຂຶ້ນສູ່ສວັນ, ພວກສິດຂອງພຣະອົງ "ສືບຕໍ່ຮ່ວມກັນອະທິຖານ" (ກຈກ 1:14). ແລະການເຕີບໃຫຍ່ໃນຄຣິສຕະຈັກສມັຍແລກເກີດຂຶ້ນໃນສະພາບແວດລ້ອມບ່ອນທີ່ສະມາຊິກໂບດ "ຕັ້ງໝັ້ນຢູ່ໃນຄຳສອນຂອງພວກອັຄສາວົກ, ໃນການຮ່ວມໃຈກັນ, ໃນການຫັກເຂົ້າຈີ່, ແລະໃນການໄຫວ້ວອນ" (ກຈກ 2:42). <u>ໃນເມື່ອເຮົາຮ່ວມກັນໃນການໄຫວ້ວອນ, ພວກເຮົາຖວາຍກຽດແດ່ພຣະເຈົ້າດ້ວຍຄວາມເປັນນ້ຳນຶ່ງໃຈດຽວຂອງເຮົາແລະດຶງດູດພລັງຈາກພວກທີ່ຍືນຢູ່ຮອບຂ້າງເຮົາ ຄຽງບ່າຄຽງໄລ່ກັນສແວງຫາການຊ່ອຍເຫຼືອຈາກພຣະເຈົ້າ.</u>

## ນຳໃຊ້ໃນຊີວິດ

ເວລາເຮົານະມັສການພຣະເຈົ້າຮ່ວມກັນ, ເຮົາພົບຄວາມຍິນດີໃນການສະຖິດນຳຂອງພຣະອົງ. ຈົ່ງເລືອກນຶ່ງຂອງການນຳໃຊ້ຕໍ່ລົງໄປນີ້:

- **ຕັ້ງເປົ້າສມ່ຳສເມີ.** ຈົ່ງໃຫ້ຄວາມສຳຄັນຂອງການນະມັສການຮ່ວມກັນເປັນນ້ຳເບີນຶ່ງ. ໃຫ້ຄຳໝັ້ນສັນຍາວ່າຈະເຂົ້າຮ່ວມນະມັສການທຸກອາທິດໃນສາມເດືອນຂ້າງໜ້າ.
- **ເປັນຜູ້ມີອິດທິພົນ.** ປະພຶດຕົນເປັນຄົນນະມັສການດ້ວຍຄວາມຊົມຊື່ນຍິນດີ. ເຂົ້ານະມັສການດ້ວຍຄວາມກະຕືລືລົ້ນ ແລະ ຈິດຈໍ່. ຮ້ອງເພງດ້ວຍຄວາມຊົມຊື່ນດີອົກດີໃຈ. ຕັ້ງອົກຕັ້ງໃຈຟັງເທສນາ. ຮ່ວມໃນການອະທິຖານດ້ວຍໃຈຊື່ນຊອບ.
- **ເຂົ້າຮ່ວມໃນການອະທິຖານ.** ກໍ່ຕັ້ງກຸ່ມອະທິຖານໃນໂບດຂອງທ່ານເປັນບຸກຄົນຫຼືອອນລາຍ. ເຊື້ອເຊີນຄົນອື່ນໃຫ້ເຂົ້າຮ່ວມທ່ານໃນເວລາອະທິຖານຂອບຄຸນ, ທູນຂໍ ແລະ ສັຣເສີນ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ PSI**